
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຂ່າວ

ກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳ ໄຕມາດ 1/2021 ແລະ ການປະກາດການແຕ່ງຕັ້ງຮອງຜູ້ອຳນວຍການ ຂອງ ທຄຕລ

ໃນວັນທີ 28-29 ເມສາ 2021, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳໄຕມາດ 1/2021 ຜ່ານລະບົບອອນລາຍ, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ, ໂດຍມີຄະນະອຳນວຍການ, ບັນດາທ່ານ ຄະນະພະແນກ, ສູນຈາກ ສຳນັກງານໃຫຍ່, ຄະນະສາຂາໃນທົ່ວລະບົບ ທຄຕລ ພ້ອມດ້ວຍພະນັກງານກ່ຽວຂ້ອງເຂົ້າຮ່ວມທັງຫມົດ 82 ທ່ານ.



ກອງປະຊຸມມີການລາຍງານຜົນການປະຕິບັດວຽກງານໃນແຕ່ລະດ້ານຂອງ ທຄຕລ ໄລຍະໄຕມາດ 1/2021, ແລກປ່ຽນບົດຮຽນໃນການບໍລິຫານງານຂອງບັນດາສາຂາ, ປຶກສາຫາລືວິທີການແກ້ໄຂຂໍ້ຄົງຄ້າງຕ່າງໆ ແລະ ຜູ້ອຳນວຍການກໍ່ຍັງໄດ້ມອບໃຫ້ແຕ່ລະພາກສ່ວນເອົາໃຈໃສ່ຕໍ່ວຽກງານການຄວບຄຸມ ແລະ ສະກັດກັ້ນການລະບາດ ຂອງພະຍາດໂຄວິດ 19 ພ້ອມທັງປຶກສາ ກ່ຽວກັບແຜນການດຳເນີນງານໃນໄຕມາດ 2/2021, ເນັ້ນໜັກພາກສ່ວນໄອທີ ເລັ່ງປັບປຸງລະບົບໃໝ່ໃຫ້ສົມບູນ ເອົາໃຈໃສ່ພັດທະນາຜະລິດຕະພັນເອເລັກໂທນິກ ແລະ ເອົາໃຈໃສ່ວຽກງານໂຄສະນາ ເຜີຍແຜ່ຜະລິດຕະພັນ-ການບໍລິການໃຫ້ເຂົ້າເຖິງທຸກກຸ່ມລູກຄ້າເປົ້າໝາຍ.





ໃນເວລາ 16:00 ໂມງ ຂອງວັນທີ 29 ເມສາ 2021 ທຄຕລ ກໍຍັງໄດ້ປະກາດການແຕ່ງຕັ້ງຮອງຜູ້ອຳນວຍການ ເພີ່ມເຕີມ, ພ້ອມທັງໄດ້ຮັບຟັງການໂອ້ລົມຈາກ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ; ລາຍ ຊື່ຮອງອຳນວຍການທີ່ໄດ້ຮັບການແຕ່ງຕັ້ງໃໝ່ຈຳນວນ 4 ທ່ານ (ຕາມລາຍຊື່ ແລະ ປະຫວັດຍໍ້ຊ້ອນທ້າຍ) ໂດຍມີຜົນ ສັກສິດແຕ່ວັນທີ 01 ພຶດສະພາ 2021 ເປັນຕົ້ນໄປ.

1. ທ່ານ ນາລິນ ສີລະວົງສິດ, ຮອງຜູ້ອຳນວຍການ ທະນາຄານພັດທະນາລາວ (ຍົກຍ້າຍມາແຕ່ ທພລ);
2. ທ່ານ ນ. ບົວໄພວັນ ນັນດາວົງ, ຫົວໜ້າພະແນກຈັດຕັ້ງ ແລະ ພະນັກງານ ທຄຕລ;
3. ທ່ານ ກົງສັກ ສຸພອນສີ, ຫົວໜ້າພະແນກກວດກາພາຍໃນ ທຄຕລ;
4. ທ່ານ ສາຍຈິດ ສີມມະວົງ, ຫົວໜ້າພະແນdຫ້ອງການບໍລິຫານ-ການເງິນ;

ຊີວະປະຫວັດຫຍໍ້



I. ສະພາບທົ່ວໄປ:

- ຊື່ ແລະ ນາມສະກຸນ: **ທ່ານ ນາລິນ ສີລະວົງສິດ**
- ວັນ, ເດືອນ, ປີເກີດ: 20/06/1969
- ຊົນເຜົ່າ: ລາວ, ສາສະໜາ: ພຸດ
- ບ້ານເກີດ: ຫ້ວຍໄຮ, ເມືອງ: ໂຂງ, ແຂວງຈໍາປາສັກ
- ບ້ານຢູ່ປັດຈຸບັນ: ບ້ານໂນນຫວາຍ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ຕໍາແໜ່ງ ແລະ ໜ້າທີ່ຮັບຜິດຊອບສາຍລັດ: ຮອງຜູ້ອໍານວຍການ ທຄຕລ
- ລະດັບການສຶກສາ-ວິຊາສະເພາະ: ປະລິນຍາໂທ ດ້ານບໍລິຫານທຸລະກິດ ຈາກປະເທດຍີ່ປຸ່ນ
- ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາອັງກິດ, ເຢຍລະມັນ ລະດັບ: ດີ

II. ສະພາບການເຄື່ອນໄຫວວຽກງານ ຈົນເຖິງປັດຈຸບັນ:

- 1992 - 1999 ເປັນພະນັກງານວິຊາການ ທຄຕລ ສໍານັກງານໃຫຍ່
- 1999 – 2003 ເປັນຫົວໜ້າພະແນກບໍລິການ ທະນາຄານຮ່ວມທຸລະກິດລາວ-ຫວຽດ
- 2003 – 2005 ໄປຍົກລະດັບຊັ້ນປະລິນຍາໂທ ຢູ່ ປະເທດຍີ່ປຸ່ນ
- 2006 - 2012 ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ ທຄຕລ
- 2012 – 2014 ເປັນຫົວໜ້າ ທຄຕລ ສາຂາດົງໂດກ
- 15/10/2014 ຍົກຍ້າຍໄປທະນາຄານພັດທະນາລາວ
- 2014 – 2017 ເປັນຜູ້ອໍານວຍການບໍລິສັດຫຼັກຊັບລ້ານຊ້າງ ມະຫາຊົນ
- 2017 – 2021 ເປັນຮອງຜູ້ອໍານວຍການ ທະນາຄານພັດທະນາລາວ.
- 01/05/2021 ເປັນຮອງຜູ້ອໍານວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຊີວະປະຫວັດຫຍໍ້



III. **ສະພາບທົ່ວໄປ:**

- ຊື່ ແລະ ນາມສະກຸນ: **ທ່ານ ນ. ບົວໄພວັນ ນັນດາວົງ**
- ວັນ, ເດືອນ, ປີເກີດ: 26/11/1971
- ຊົນເຜົ່າ: ລາວ, ສາສະໜາ: ພຸດ
- ບ້ານເກີດ: ຊຽງຫວາງ, ເມືອງ: ໂຂງ, ແຂວງຈໍາປາສັກ
- ບ້ານຢູ່ປັດຈຸບັນ: ບ້ານສະພານທອງເໜືອ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ຕໍາແໜ່ງ ແລະ ໜ້າທີ່ຮັບຜິດຊອບສາຍລັດ: ຮອງຜູ້ອໍານວຍການ ທຄຕລ
- ລະດັບການສຶກສາ-ວິຊາສະເພາະ: ປະລິນຍາໂທ ດ້ານ ຄຸ້ມຄອງເສດຖະກິດ ຈາກໂຮງຮຽນການເມືອງ-ການປົກຄອງ (ຢູ່ເຂດສີສະເກດ).
- ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາອັງກິດ ລະດັບ: ດີ

IV. ສະພາບການເຄື່ອນໄຫວວຽກງານຈົນເຖິງປັດຈຸບັນ:

- 1993 – 1994 ເປັນພະນັກງານວິຊາການ ທຄຕລ ໜ່ວຍບໍລິການຕະຫຼາດເຊົ້າ
- 1994 – 1997 ເປັນພະນັກງານວິຊາການ ພະແນກຫ້ອງການບໍລິຫານ ແລະ ການເງິນ
- 1997–2009 ເປັນພະນັກງານວິຊາການພະແນກຈັດຕັ້ງ-ພະນັກງານ ທຄຕລ ສໍານັກງານໃຫຍ່
- 2011–2013 ເປັນຮອງຫົວໜ້າພະແນກຈັດງຕັ້ງ-ພະນັກງານ ທຄຕລ ສໍານັກງານໃຫຍ່
- 2013–2015 ເປັນຮອງຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ
- 2015–2018 ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສໍານັກງານໃຫຍ່
- 2018–2019 ເປັນວ່າການຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສໍານັກງານໃຫຍ່
- 10/01/2019 -2021 ເປັນຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສໍານັກງານໃຫຍ່
- 01/05/2021 ເປັນຮອງຜູ້ອໍານວຍການ ທຄຕລ

ຊີວະປະຫວັດຫຍໍ້



V. ສະພາບທົ່ວໄປ:

- ຊື່ ແລະ ນາມສະກຸນ: **ທ່ານ ກົງສັກ ສຸພອນສີ**
- ວັນ, ເດືອນ, ປີເກີດ: 12/11/1977
- ຊົນເຜົ່າ: ລາວ, ສາສະໜາ: ພຸດ
- ບ້ານເກີດ: ບ້ານພູຂຽວ, ເມືອງໄຊ, ແຂວງອຸດົມໄຊ
- ບ້ານຢູ່ປັດຈຸບັນ: ບ້ານ ຫນອງພະຍາ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບສາຍລັດ: ຮອງຜູ້ອຳນວຍການ ທຄຕລ
- ລະດັບການສຶກສາ-ວິຊາສະເພາະ: ປະລິນຍາຕີ ດ້ານ ການເງິນ-ການທະນາຄານ ວິທະຍາໄລຣັດຕະນະ ບໍລິຫານທຸລະກິດ.

  ປະລິນຍາໂທ ສາຂາບໍລິຫານການເງິນ ທີ່ມະຫາວິທະຍາໄລແຫ່ງຊາດ (ກຳລັງສຶກສາ)
- ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາອັງກິດ ລະດັບ: ດີ

VI. ສະພາບການເຄື່ອນໄຫວວຽກງານ ຈົນເຖິງປັດຈຸບັນ:

- 26/05/2000 ເຂົ້າເປັນພະນັກງານ ທຄຕລ ສາຂາອຸດົມໄຊ;
- 2005 – 2007 ຖືກແຕ່ງຕັ້ງເປັນອຳການຫົວໜ້າຂະແໜງເງິນກູ້ ທຄຕລ ສາຂາອຸດົມໄຊ;
- 13/12/2007 ເລື່ອນຕຳແໜ່ງວ່າການຫົວໜ້າຂະແໜງເງິນກູ້ເປັນຫົວໜ້າຂະແໜງບໍລິການ ທຄຕລ ສາຂາອຸດົມໄຊ;
- 20/05/2008 ຖືກແຕ່ງຕັ້ງເປັນວ່າການຮອງຫົວໜ້າ ທຄຕລ ສາຂາອຸດົມໄຊ;
- 12/05/2010 ຖືກແຕ່ງຕັ້ງເປັນວ່າການຫົວໜ້າ ທຄຕລ ສາຂາຫົວພັນ;
- 29/04/2013 ເລື່ອນຕຳແໜ່ງວ່າການເປັນຫົວໜ້າ ທຄຕລ ສາຂາຫົວພັນ;
- 27/10/2014 ຖືກສັບຊ້ອນເປັນຫົວໜ້າ ທຄຕລ ສາຂາຫຼວງນ້ຳທາ;
- 2016-2018 ຍົກລະດັບທິດສະດີການເມືອງຊັ້ນສູງ (ລະບົບກໍ່ສ້າງ) ຢູ່ທີ່ໂຮງຮຽນການເມືອງ ການປົກຄອງ ນະຄອນຫລວງວຽງຈັນ.
- 03/09/2018 –2021 ເປັນຫົວໜ້າພະແນກກວດກາພາຍໃນ ທຄຕລ ສຳນັກງານໃຫຍ່;
- 01/05/2021 ເປັນຮອງຜູ້ອຳນວຍການ ທຄຕລ

ຊີວະປະຫວັດຫຍໍ້



VII. ສະພາບທົ່ວໄປ:

- ຊື່ ແລະ ນາມສະກຸນ: **ທ່ານ ສາຍຈິດ ສົມມະວົງ**
- ວັນ, ເດືອນ, ປີ ເກີດ: 11/02/1972
- ຊົນເຜົ່າ: ລາວ, ສາສະໜາ: ພຸດ
- ບ້ານເກີດ: ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ບ້ານຢູ່ປັດຈຸບັນ: ບ້ານຮ່ອງແກ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບສາຍລັດ: ຮອງຜູ້ອຳນວຍການ ທຄຕລ
- ລະດັບການສຶກສາ-ວິຊາສະເພາະ: ປະລິນຍາໂທ ດ້ານ ຄຸ້ມຄອງເສດຖະກິດ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
- ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ພາສາອັງກິດ ລະດັບ: ດີ
  ພາສາຝຣັ່ງ ລະດັບ: ດີ

VIII. ສະພາບການເຄື່ອນໄຫວວຽກງານ ຈົນເຖິງປັດຈຸບັນ:

- 10/09/1995 ເຂົ້າເປັນພະນັກງານສູນບໍລິການ ທຄຕລ ສຳນັກງານໃຫຍ່;
- 1988 - 1999 ຖືກແຕ່ງຕັ້ງເປັນຫົວໜ້າຫ້ອງແລກປ່ຽນຂໍ້ມູນຕະພາບ, ສູນບໍລິການ
- 1999 - 2000 ຖືກສັບຊ້ອນເປັນຫົວໜ້າຫ້ອງແລກປ່ຽນຫຸ້ນສ່ວນສີຫອມ, ສູນບໍລິການ
- 2000 - 2006 ຖືກສັບຊ້ອນເປັນຫົວໜ້າໜ່ວຍງານຮຽກເກັບແຊັກ, ພະແນກບໍລິຫານທຶນ
- 2007- 2013 ຖືກແຕ່ງຕັ້ງເປັນ ຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການບໍລິຫານ-ການເງິນ
- 2013-2014 ຖືກແຕ່ງຕັ້ງເປັນຮອງຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ
- 27/10/2014 ຖືກແຕ່ງຕັ້ງເປັນວ່າການຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ
- 08/01/2018 ເລື່ອນຕຳແໜ່ງວ່າການເປັນຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ.
- 08/01/2018-ປະຈຸບັນ ເປັນຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ.